ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ສະພາປະຊາຊົນແຂວງໄຊຍະບູລີ

ເລກທີ 60 /ສພຂ.ຊຍ
ໄຊຍະບູລີ, ວັນທີ 28 ສິງຫາ 2023

# ມະຕິ

## ກອງປະຊຸມສະພາປະຊາຊົນແຂວງ
## ວ່າດ້ວຍການຮັບຮອງເອົາ ບົດລາຍງານ ຂອງອົງການປົກຄອງແຂວງ
## ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມຂອງແຂວງ
## ປະຈຳ 6 ເດືອນຕົ້ນປີ ແລະ ທິດທາງແຜນການ 6 ເດືອນທ້າຍປີ 2023

- ອີງຕາມ ລັດຖະທຳມະນູນແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບປັບປຸງ ປີ 2015 ມາດຕາ 77 ສິດ ແລະ ໜ້າທີ່ຂອງສະພາປະຊາຊົນຂັ້ນແຂວງ;
- ອີງຕາມ ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ ສະບັບເລກທີ 65/ສພຊ, ລົງວັນທີ 10 ທັນວາ 2015;
- ອີງຕາມ ບົດລາຍງານຂອງອົງການປົກຄອງແຂວງ ໃນວັນທີ 23 ສິງຫາ 2023 ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມຂອງແຂວງ 6 ເດືອນຕົ້ນປີ ແລະ ທິດທາງແຜນການ 6 ເດືອນທ້າຍປີ 2023.

ຜ່ານການຄົ້ນຄວ້າ, ພິຈາລະນາຢ່າງກວ້າງຂວາງ ແລະ ເລິກເຊິ່ງ ຕໍ່ບົດລາຍງານຂອງອົງການປົກຄອງແຂວງ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມຂອງແຂວງ ປະຈຳ 6 ເດືອນຕົ້ນປີ ແລະ ທິດທາງແຜນການ 6 ເດືອນທ້າຍປີ 2023. ໃນກອງປະຊຸມສະໄໝສາມັນ ເທື່ອທີ 5 ຂອງສະພາປະຊາຊົນແຂວງ ຊຸດທີ II.

### ກອງປະຊຸມຕົກລົງ:

**ມາດຕາ 1 ຮັບຮອງເອົາ ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມຂອງແຂວງ 6 ເດືອນຕົ້ນປີ 2023**

ກອງປະຊຸມສະພາປະຊາຊົນແຂວງ ເຫັນດີ ຕໍ່ເນື້ອໃນ ບົດລາຍງານຂອງອົງການປົກຄອງແຂວງ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມຂອງແຂວງ 6 ເດືອນຕົ້ນປີ 2023 ໃນສະພາບເສດຖະກິດຂອງພາກພື້ນ ແລະ ສາກົນ ທີ່ສືບຕໍ່ພັນແປຢ່າງສັບສົນບວກກັບຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນພາຍໃນປະເທດທີ່ແກ່ຍາວ ມາເປັນເວລາຫຼາຍປີ ໄດ້ສົ່ງຜົນກະທົບຕໍ່ຜົນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມຂອງແຂວງ 6 ເດືອນຕົ້ນປີ 2023. ແຕ່ອົງການປົກຄອງແຂວງກໍ່ມີຄວາມພະຍາຍາມສູ້ຊົນ ສາມາດຍາດໄດ້ຜົນສຳເລັດສຳຄັນ ດັ່ງນີ້:

1) ຮັກສາໄດ້ສະຖຽນລະພາບທາງດ້ານການເມືອງໜັກແໜ້ນ, ສັງຄົມມີຄວາມສະຫງົບ ແລະ ເປັນລະບຽບຮຽບຮ້ອຍ ເປັນຕົ້ນ ໄດ້ສຸມໃສ່ຈັດຕັ້ງປະຕິບັດວາລະແຫ່ງຊາດວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ແລະ ປະກົດການຫຍໍ້ທໍ້ໄດ້ຫຼາຍກໍລະນີໃນຂອບເຂດທົ່ວແຂວງ;

2) ໄດ້ສຸມໃສ່ຈັດຕັ້ງປະຕິບັດວາລະແຫ່ງຊາດວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດການເງິນ, ສູ້ຊົນຈັດຕັ້ງປະຕິບັດຄາດໝາຍເສດຖະກິດຕາມແຜນການທີ່ໄດ້ຮັບຮອງ ໃນກອງປະຊຸມສະໄໝສາມັນ ເທື່ອທີ 4 ຂອງສະພາປະຊາຊົນແຂວງ ຊຸດທີ II;

3) ການປະຕິບັດຄາດໝາຍດ້ານງົບປະມານ: ສາມາດເກັບລາຍຮັບ 6 ເດືອນຕົ້ນປີ ບັນລຸໄດ້ 954,12 ຕື້ກີບ ເທົ່າກັບ 62,99% ຂອງແຜນການປີ; ການຄຸ້ມຄອງລາຍຈ່າຍປະຕິບັດໄດ້ 272,92 ຕື້ກີບ ເທົ່າກັບ 54,66% ຂອງແຜນການປີ;

4) ດ້ານການລົງທຶນເພື່ອການພັດທະນາ: ປະຕິບັດໄດ້ 1.329 ຕື້ກີບ ເທົ່າກັບ 36% ຂອງແຜນການປີ;

5) ດ້ານການຄ້າ: ມູນຄ່າການສົ່ງອອກບັນລຸໄດ້ 63,35 ລ້ານໂດລາສະຫະລັດ ເທົ່າກັບ 52,30% ຂອງແຜນການປີ. ການນໍາເຂົ້າສິນຄ້າ ປະຕິບັດໄດ້ 18,04 ລ້ານໂດລາສະຫະລັດ ເທົ່າກັບ 15% ຂອງແຜນການປີ;

6) ການປະຕິບັດຄາດໝາຍໃນຂົງເຂດ ວັດທະນະທໍາ-ສັງຄົມ ມີຄວາມຄືບໜ້າຫຼາຍຄາດໝາຍ ເປັນຕົ້ນ ອັດຕາການເຂົ້າຮຽນຂອງເດັກ 5 ປີ; ອັດຕາເຂົ້າຮຽນໃໝ່ສຸດທີ ປ.1 ເພີ່ມຂຶ້ນ; ອັດຕາການຕາຍຂອງແມ່ ແລະ ເດັກ; ອັດຕາການປົກຄຸມປະກັນສຸຂະພາບ; ສົ່ງເສີມການຝຶກ ແລະ ພັດທະນາສີມືແຮງງານ; ການດຶງດູດນັກທ່ອງທ່ຽວເຂົ້າມາທ່ອງທ່ຽວພາຍໃນແຂວງ ມີຈໍານວນເພີ່ມຂຶ້ນ.

**ມາດຕາ 2 ຮັບຮອງເອົາທິດທາງແຜນການພັດທະນາເສດຖະກິດ-ສັງຄົມຂອງແຂວງ 6 ເດືອນທ້າຍປີ 2023**

ກອງປະຊຸມເຫັນດີຮັບຮອງ ແຜນວຽກຈຸດສຸມ ຕາມການສະເໜີຂອງອົງການປົກຄອງແຂວງ, ເພື່ອຮັບປະກັນໃຫ້ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມຂອງແຂວງ ບັນລຸຕາມແຜນການໃນທ້າຍປີ 2023 ກອງປະຊຸມສະເໜີໃຫ້ ເອົາໃຈໃສ່ເພີ່ມເຕີມ ດັ່ງນີ້:

**I. ດ້ານເສດຖະກິດມະຫາພາກ:**

1. ສູ້ຊົນໃຫ້ເສດຖະກິດຂອງແຂວງສືບຕໍ່ຂະຫຍາຍຕົວຮອດທ້າຍປີ ບໍ່ໃຫ້ຫຼຸດ 5% ແລະ ລວມຍອດຜະລິດຕະພັນພາຍໃນປີໃຫ້ໄດ້ປະມານ 14.963 ຕື້ກີບ, ສະເລ່ຍຕໍ່ຫົວຄົນໃຫ້ໄດ້ 2.081 ໂດລາສະຫະລັດ, ໃນນັ້ນ: ໂຄງປະກອບເສດຖະກິດ
   - ກະສິກໍາໃຫ້ຂະຫຍາຍຕົວ 3% ກວມ 26%;
   - ອຸດສາຫະກໍາໃຫ້ຂະຫຍາຍຕົວ 8,7% ກວມ 38%;
   - ການບໍລິການໃຫ້ຂະຫຍາຍຕົວ 3,7% ກວມ 36% ຂອງລວມຍອດຜະລິດຕະພັນພາຍໃນ.
2. ດ້ານລາຍຮັບ: ສູ້ຊົນເກັບລາຍຮັບ 6 ເດືອນທ້າຍປີ 2023 ໃຫ້ບັນລຸ 611,48 ຕື້ກີບ ເທົ່າກັບ 40,36% ຂອງແຜນການປີ, ຄາດຄະເນໝົດປີໃຫ້ໄດ້ 1.565,60 ຕື້ກີບ, ໃນນັ້ນ:
   - ລາຍຮັບພູດສູນກາງ: ໃຫ້ໄດ້ 463,49 ຕື້ກີບ, ເທົ່າກັບ 45,89% ຂອງແຜນການປີ, ຄາດຄະເນໝົດປີ. ປະຕິບັດໃຫ້ໄດ້ 1.060,86 ຕື້ກີບ;
   - ລາຍຮັບພູດທ້ອງຖິ່ນ: ໃຫ້ໄດ້ 251,8 ຕື້ກີບ, ເທົ່າກັບ 49,88% ຂອງແຜນການປີ ຄາດຄະເນໝົດປີປະຕິບັດໃຫ້ໄດ້ 504,74 ຕື້ກີບ.
3. ດ້ານລາຍຈ່າຍ: ໃຫ້ຢູ່ໃນລະດັບ 342,02 ຕື້ກີບ, ກວມເອົາ 68,50% ຂອງແຜນການປີ, ຄາດຄະເນໝົດປີໃຫ້ໄດ້ 614,51 ຕື້ກີບ;
4. ສູ້ຊົນລະດົມທຶນເພື່ອການພັດທະນາ ໃຫ້ໄດ້ 2,618 ຕື້ກີບ ເທົ່າກັບ 70% ຂອງແຜນການປີ, ໝົດປີໃຫ້ໄດ້ 3,740 ຕື້ກີບ ກວມເອົາ 25% ຂອງ GDP.

**II. ດ້ານເສດຖະກິດຂອງບັນດາຂະແໜງການ:**

**1. ກະສິກໍາ ແລະ ປ່າໄມ້:**

- ສູ້ຊົນຜະລິດເຂົ້າໃຫ້ໄດ້ 189.000 ໂຕນ;

- ສູ້ຊົນຜະລິດພືດສະບຽງອາຫານໃຫ້ໄດ້ 159.000 ໂຕນ;
- ສູ້ຊົນຜະລິດພືດເປັນສິນຄ້າໃຫ້ໄດ້ 2.100.000 ໂຕນ;
- ສູ້ຊົນໃຫ້ຝູງສັດລ້ຽງຂະຫຍາຍຕົວ ສະເລ່ຍ 7% ຕໍ່ປີ;
- ສູ້ຊົນຜະລິດ ຊີ້ນ, ໄຂ່ ແລະ ປາ ໃຫ້ໄດ້ 23.553 ໂຕນ;
- ສູ້ຊົນຜະລິດສັດເປັນສິນຄ້າ ທັງພາຍໃນ ແລະ ສົ່ງອອກໄປຕ່າງແຂວງ ໃຫ້ໄດ້ 65.900 ໂຕ;
- ສຸມໃສ່ຈັດຕັ້ງປະຕິບັດ 12 ໜ້າວຽກຈຸດສຸມ ທີ່ໄດ້ກໍານົດໄວ້ໃນແຜນຈັດຕັ້ງປະຕິບັດວາລະແຫ່ງຊາດ ກ່ຽວກັບການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ສະບັບເລກທີ 191/ຈຂ.ຊຍ.

2. ອຸດສາຫະກໍາ ແລະ ການຄ້າ:

- ສູ້ຊົນເຮັດໃຫ້ມູນຄ່າການສົ່ງອອກສິນຄ້າໄປຕ່າງປະເທດໃຫ້ບັນລຸ 33,88 ລ້ານໂດລາ
- ຄຸ້ມຄອງການນໍາເຂົ້າສິນຄ້າຈາກຕ່າງປະເທດໃຫ້ຢູ່ໃນລະດັບ 47,23 ລ້ານໂດລາ
- ສູ້ຊົນເຮັດໃຫ້ມູນຄ່າການຜະລິດດ້ານອຸດສາຫະກໍາ ແລະ ຫັດຖະກໍາ ໃຫ້ບັນລຸ 198,9 ຕື້ກີບ ແລະ ມູນຄ່າການຈໍາໜ່າຍຜະລິດຕະພັນອຸດສາຫະກໍາ ແລະ ຫັດຖະກໍາ ໃຫ້ບັນລຸ 325 ຕື້ກີບ;
- ສຸມໃສ່ຈັດຕັ້ງປະຕິບັດ 6 ໜ້າວຽກຈຸດສຸມ ທີ່ໄດ້ກໍານົດໄວ້ໃນແຜນຈັດຕັ້ງປະຕິບັດວາລະແຫ່ງຊາດ ກ່ຽວກັບການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ສະບັບເລກທີ 191/ຈຂ.ຊຍ.

3. ພະລັງງານ ແລະ ບໍ່ແຮ່:

- ສືບຕໍ່ປັບປຸງລະບົບຕາຂ່າຍໄຟຟ້າ ແລະ ສະຖານີຍ່ອຍ ເພື່ອໃຫ້ລະບົບມີຄວາມສະຖຽນລະພາບ ຮັບປະກັນການສະໜອງພະລັງງານໃຫ້ຜູ້ຊົມໃຊ້ພຽງພໍ ແລະ ທົ່ວເຖິງ;
- ສູ້ຊົນ ຜະລິດກະແສໄຟຟ້າ ໃຫ້ໄດ້ 75,24 ລ້ານກິໂລວັດໂມງ ແລະ ສູ້ຊົນຈໍາໜ່າຍກະແສໄຟຟ້າພາຍໃນ ໃຫ້ໄດ້ 88,04 ລ້ານກິໂລວັດໂມງ;
- ສຸມໃສ່ຈັດຕັ້ງປະຕິບັດ 8 ໜ້າວຽກຈຸດສຸມ ທີ່ໄດ້ກໍານົດໄວ້ໃນແຜນຈັດຕັ້ງປະຕິບັດວາລະແຫ່ງຊາດ ກ່ຽວກັບການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ສະບັບເລກທີ 191/ຈຂ.ຊຍ.

4. ໂຍທາທິການ ແລະ ຂົນສົ່ງ:

- ສືບຕໍ່ປັບປຸງເສັ້ນທາງຫຼວງແຫ່ງຊາດ, ເສັ້ນທາງຫຼວງທ້ອງຖິ່ນ ໃຫ້ມີຄວາມລຶງລ່ຽນ ເຊື່ອມໂຍງ-ເຊື່ອມຈອດກັບບັນດາແຂວງ, ແລວເສດຖະກິດທາງລົດໄຟ ແລະ ປະເທດໃກ້ຄຽງ ໃຫ້ມີຄວາມສະດວກໃນການຂົນສົ່ງສິນຄ້າ;
- ສືບຕໍ່ປັບປຸງລະບົບການຂົນສົ່ງຜ່ານແດນ ໂດຍພັດທະນາຈຸດພັກຄ່ຽນສິນຄ້າຢູ່ດ່ານສາກົນ;
- ສືບຕໍ່ສ້າງຈຸດຄ່ຽນຖ່າຍການຂົນສົ່ງສິນຄ້າກະສິກໍາເຊື່ອມທາງຫຼວງແຫ່ງຊາດ ແລະ ທາງຫຼວງທ້ອງຖິ່ນ, ບໍລິມາດຂົນສົ່ງໃຫ້ເພີ່ມຂຶ້ນ 10-12%;
- ສືບຕໍ່ການແກ້ໄຂບັນດາໂຄງການກໍ່ສ້າງພື້ນຖານໂຄງລ່າງ ທີ່ຈັດຕັ້ງປະຕິບັດທີ່ຫຼ້າຊ້າ, ບໍ່ປະຕິບັດຕາມສັນຍາ;
- ສຸມໃສ່ຈັດຕັ້ງປະຕິບັດ 12 ໜ້າວຽກຈຸດສຸມ ທີ່ໄດ້ກໍານົດໄວ້ໃນແຜນຈັດຕັ້ງປະຕິບັດວາລະແຫ່ງຊາດ ກ່ຽວກັບການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ສະບັບເລກທີ 191/ຈຂ.ຊຍ.

5. ຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ:

- ສືບຕໍ່ຈັດສັນທີ່ດິນຂັ້ນເມືອງ 2 ເມືອງໃຫ້ສໍາເລັດ, ຈັດສັນທີ່ດິນຂັ້ນບ້ານໃຫ້ໄດ້ 27 ບ້ານ;

- ຂຶ້ນທະບຽນອອກໃບຕາດິນ ພ້ອມທັງບັນທຶກຂໍ້ມູນເຂົ້າລະບົບທີ່ທັນສະໄໝ ໃຫ້ໄດ້ 4.071 ຕອນ, ປະເມີນຄືນການຈັດສັນທີ່ດິນ 8 ປະເພດ ຂັ້ນບ້ານໃຫ້ໄດ້ 60 ບ້ານ ແລະ ເກັບກຳສຳມະໂນທີ່ດິນປີ 2023 ໃຫ້ໄດ້ 500 ຕອນ;
- ສືບຕໍ່ຊຸກຍູ້ບັນດາໂຄງການ, ກິດຈະການທຸລະກິດແບບຄອບຄົວ ສ້າງແຜນຄຸ້ມຄອງສິ່ງແວດລ້ອມ ພ້ອມທັງພິຈາລະນາອອກໃບຢັ້ງຢືນສິ່ງແວດລ້ອມໃຫ້ໄດ້ 259 ຫົວໜ່ວຍ;
- ສຸມໃສ່ຈັດຕັ້ງປະຕິບັດ 6 ໜ້າວຽກຈຸດສຸມ ທີ່ໄດ້ກຳນົດໄວ້ໃນແຜນຈັດຕັ້ງປະຕິບັດວາລະແຫ່ງຊາດ ກ່ຽວກັບການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ສະບັບເລກທີ 191/ຈຂ.ຊຍ.

6. **ໄປສະນີ ແລະ ການສື່ສານ:**
- ສືບຕໍ່ຊຸກຍູ້ ບັນດາສາຂາບໍລິສັດໂທລະຄົມມະນາຄົມ ຂຶ້ນທະບຽນເລກໝາຍໂທລະສັບໃຫ້ສຳເລັດ;
- ສືບຕໍ່ຊຸກຍູ້ຂະຫຍາຍໂຄງລ່າງພື້ນຖານຕາໜ່າງໂທລະຄົມ ບ້ານທີ່ບໍ່ມີສັນຍານ ແລະ ບ້ານທີ່ມີສັນຍານອ່ອນ ໃຫ້ສຳເລັດ;
- ສືບຕໍ່ຝຶກອົບຮົມພັດທະນາຄວາມຮູ້ການນຳໃຊ້ບໍລິການລະບົບບໍລິຫານລັດດ້ວຍດີຈີຕອນ ແລະ ເຜີຍແຜ່ແຜນພັດທະນາເສດຖະກິດດີຈີຕ້ອນຂອງສປປລາວ ໃຫ້ໄດ້ 04 ຊຸດຂຶ້ນໄປ;
- ສຸມໃສ່ຈັດຕັ້ງປະຕິບັດ 12 ໜ້າວຽກຈຸດສຸມ ທີ່ໄດ້ກຳນົດໄວ້ໃນແຜນຈັດຕັ້ງປະຕິບັດວາລະແຫ່ງຊາດ ກ່ຽວກັບການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ສະບັບເລກທີ 191/ຈຂ.ຊຍ.

**III. ດ້ານວັດທະນະທຳ-ສັງຄົມ**

1. **ສຶກສາທິການ ແລະ ກິລາ:** ສືບຕໍ່ຮັກສາ 7 ຄາດໝາຍທີ່ບັນລຸແລ້ວ ແລະ ສູ້ຊົນຈັດຕັ້ງປະຕິບັດ 12 ຄາດໝາຍທີ່ບໍ່ທັນບັນລຸ ໃຫ້ສາມາດບັນລຸໄດ້ໃນທ້າຍປີຄື: (1) ອັດຕາເຂົ້າຮຽນໃໝ່ລວມ ປ.1, (2) ອັດຕາເຂົ້າຮຽນໃໝ່ລວມ ປ.5, (3) ອັດຕາປະລະຂັ້ນ ປ1, (4) ອັດຕາເລື່ອນຂັ້ນ-ຈົບຊັ້ນ, (5) ອັດຕາຄ້າງຫ້ອງຊັ້ນປະຖົມ, (6) ອັດຕາເລື່ອນຊັ້ນ ປ.5 ຂຶ້ນ ມ.1, (7) ອັດຕາປະລະຊັ້ນປະຖົມ, (8) ອັດຕາເຂົ້າຮຽນລວມມັດທະຍົມຕອນຕົ້ນ, (9) ອັດຕາເຂົ້າຮຽນລວມມັດທະຍົມຕອນປາຍ, (10) ອັດຕາເຂົ້າຮຽນໃໝ່ລວມ ມ.4, (11) ອັດຕາປະລະມັດທະຍົມຕອນຕົ້ນ ແລະ (12) ນັກຮຽນທີ່ຮຽນຈົບຊັ້ນມັດທະຍົມຕອນຕົ້ນໄດ້ເຂົ້າຮຽນຕໍ່ໃນສາຍອາຊີວະສຶກສາ ແລະ ອົບຮົມວິຊາຊີບ.

2. **ສາທາລະນະສຸກ:** ສືບຕໍ່ຮັກສາ 9 ຄາດໝາຍທີ່ບັນລຸແລ້ວ ແລະ ສູ້ຊົນຈັດຕັ້ງປະຕິບັດ 2 ຄາດໝາຍທີ່ບໍ່ທັນບັນລຸຄື: (1) ອັດຕາການເກີດລູກມີແພດຊ່ວຍ; (2) ອັດຕາການສັກຢາກັນພະຍາດໃນເດັກນ້ອຍລຸ່ມ 1 ປີ;

3. **ແຮງງານ ແລະ ສະຫວັດດີການ-ສັງຄົມ:**
- ສືບຕໍ່ຝຶກອົບຮົມ ແລະ ພັດທະນາສີມືແຮງງານ ໃຫ້ໄດ້ 250 ຄົນ;
- ສືບຕໍ່ຈັດຫາງານພາຍໃນໃຫ້ກຳລັງແຮງງານລາວເຂົ້າເຮັດວຽກໃຫ້ໄດ້ 1.989 ຄົນ;
- ສືບຕໍ່ຂະຫຍາຍອັດຕາການປົກຄຸມປະກັນສັງຄົມໃຫ້ໄດ້ 606 ຄົນ;
- ສືບຕໍ່ປະຕິບັດນະໂຍບາຍ ຕາມດຳລັດ 272/ລບ ໃຫ້ຜູ້ທີ່ມີຄຸນງາມຄວາມດີໃນພາລະກິດຮັບໃຊ້ການປະຕິວັດຊາດ ປະຊາທິປະໄຕ ໃຫ້ໄດ້ 33 ທ່ານ;
- ສືບຕໍ່ປຸກລະດົມທຶນເຂົ້າກອງທຶນຄຸ້ມຄອງໄພພິບັດໃຫ້ໄດ້ 535 ລ້ານກີບ;
- ສຸມໃສ່ຈັດຕັ້ງປະຕິບັດ 4 ໜ້າວຽກຈຸດສຸມ ທີ່ໄດ້ກຳນົດໄວ້ໃນແຜນຈັດຕັ້ງປະຕິບັດວາລະແຫ່ງຊາດ ກ່ຽວກັບການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ສະບັບເລກທີ 191/ຈຂ.ຊຍ.

4. ຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ:

- ສືບຕໍ່ຜະລິດຂ່າວອອກອາກາດຢູ່ພາຍໃນແຂວງ ແລະ ສົ່ງໃຫ້ສູນກາງ ໃຫ້ໄດ້ 3.250 ຂ່າວ;
- ສືບຕໍ່ສ້ອມແປງ ແລະ ປັບປຸງຖ່າຍອຸປະກອນໂທລະໂຄ່ງທີ່ເປ່ເພ ໃຫ້ໄດ້ 5 ບ້ານໃນທົ່ວແຂວງ;
- ສືບຕໍ່ຝຶກອົບຮົມທັກສະການຂຽນຂ່າວ ແລະ ເຕັກນິກການຖ່າຍພາບ, ຖ່າຍວີດີໂອໃຫ້ນັກຂ່າວເມືອງ ແລະ ຕາໜ່າງຂ່າວອ້ອມຂ້າງແຂວງໃຫ້ໄດ້ 1 ຄັ້ງ ຄາດຄະເນຜູ້ເຂົ້າຮ່ວມ 30 ຄົນ;
- ສືບຕໍ່ສ້າງຄອບຄົວວັດທະນະທຳ ໃຫ້ໄດ້ 650 ຄອບຄົວ, ສ້າງບ້ານວັດທະນະທຳ ໃຫ້ໄດ້ 5 ບ້ານ, ສ້າງກຸ່ມກອງວັດທະນະທຳ ໃຫ້ໄດ້ 45 ກຸ່ມກອງ.
- ສືບຕໍ່ດຶງດູດນັກທ່ອງທ່ຽວເຂົ້າມາແຂວງໄຊຍະບູລີ ໃຫ້ໄດ້ 100.000 ຄົນ, ສ້າງລາຍຮັບຈາກການທ່ອງທ່ຽວ ໃຫ້ໄດ້ 2.5 ລ້ານໂດລາສະຫະລັດ ແລະ ຝຶກອົບຮົມໃຫ້ພະນັກງານທີ່ເຮັດວຽກບໍລິການດ້ານການທ່ອງທ່ຽວ ໃຫ້ໄດ້ 70 ຄົນຂຶ້ນໄປ;
- ສຸມໃສ່ຈັດຕັ້ງປະຕິບັດ 3 ໜ້າວຽກຈຸດສຸມ ທີ່ໄດ້ກຳນົດໄວ້ໃນແຜນຈັດຕັ້ງປະຕິບັດວາລະແຫ່ງຊາດ ກ່ຽວກັບການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ສະບັບເລກທີ 191/ຈຂ.ຊຍ.

5. ການພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ:

- ສືບຕໍ່ສູ້ຊົນສ້າງບ້ານພົ້ນທຸກໃຫ້ໄດ້ 8 ບ້ານ, ເມືອງພົ້ນທຸກໃຫ້ໄດ້ 1 ເມືອງ, ລຶບລ້າງຄອບຄົວທຸກຍາກ ໃຫ້ໄດ້ 732 ຄອບຄົວ, ສ້າງຄອບຄົວພັດທະນາໃຫ້ໄດ້ 1.000 ຄອບຄົວ;
- ສືບຕໍ່ສູ້ຊົນສ້າງບ້ານໃຫຍ່ເປັນຕົວເມືອງນ້ອຍໃຫ້ໄດ້ 1 ຈຸດ ບ້ານທອງ ເມືອງເງິນ; ສ້າງບ້ານແບບຢ່າງທາງດ້ານກະສິກຳ ແລະ ປ່າໄມ້ ໃຫ້ໄດ້ 6 ບ້ານຢູ່ເມືອງພຽງ.

ມາດຕາ 4 ຮັບຮອງເອົາມາດຕະການຈັດຕັ້ງປະຕິບັດ

ກອງປະຊຸມເຫັນດີຮັບຮອງເອົາ 3 ມາດຕະການ ຕາມການສະເໜີຂອງອົງການປົກຄອງແຂວງ; ເພື່ອຮັບປະກັນໃຫ້ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມຂອງແຂວງ ບັນລຸຕາມຄາດໝາຍໃນທ້າຍປີ 2023, ກອງປະຊຸມສະເໜີໃຫ້ອົງການປົກຄອງແຂວງເອົາໃຈໃສ່ບາງມາດຕະການ ເພີ່ມເຕີມດັ່ງນີ້:

1. ກອງປະຊຸມສະເໜີໃຫ້ອົງການປົກຄອງແຂວງ ສືບຕໍ່ສູ້ຊົນສຸມໃສ່ຈັດຕັ້ງປະຕິບັດແຜນການ ແລະ ມາດຕະການ ທີ່ກຳນົດໄວ້ໃນມະຕິສະບັບເລກທີ 04/ສພຂ.ຊຍ ແລະ ແຜນວຽກຈຸດສຸມ 6 ເດືອນທ້າຍປີຂອງແຜນພັດທະນາເສດຖະກິດ-ສັງຄົມຂອງແຂວງ ພ້ອມທັງຊຸກຍູ້ໃຫ້ທຸກຂະແໜງການຂອງແຂວງ, ເມືອງ ຜັນຂະຫຍາຍເປັນແຜນງານ, ໂຄງການລະອຽດ ໃຫ້ຕິດພັນກັບການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ;
2. ສືບຕໍ່ແກ້ໄຂບັນຫາທີ່ເຄັ່ງຮ້ອນໃນການປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ເປັນຕົ້ນ:
   1) ຕິດຕາມກວດກາ ແລະ ຄຸ້ມຄອງ ການເໜັງຕີງຂອງລາຄາສິນຄ້າອຸປະໂພກບໍລິໂພກ ໃຫ້ຮັດກຸມ;
   2) ເອົາໃຈໃສ່ຕິດຕາມກວດກາ ແລະ ຄຸ້ມຄອງ ການນຳໃຊ້ເງິນຕາ ຕາມຄຳສັ່ງ ເລກທີ 10/ນຍ ວ່າດ້ວຍການຈັດຕັ້ງປະຕິບັດການຄຸ້ມຄອງເງິນຕາຕ່າງປະເທດ ໃຫ້ເຂັ້ມງວດ;
   3) ເອົາໃຈໃສ່ປະຕິບັດກົນໄກປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ, ການມີສ່ວນແຕ່ຫົວທີຂອງສະພາປະຊາຊົນແຂວງ ໃນການຄົ້ນຄວ້າຈັດສັນ ແລະ ສ້າງແຜນການລົງທຶນຂອງລັດປີ 2024 ໃຫ້ຈະແຈ້ງ ແລະ ສຳເລັດໂດຍໄວ;
   4) ຮີບຮ້ອນເອົາໃຈໃສ່ການຈັດສັນທີ່ດິນ, ການອອກໃບຕາດິນໃຫ້ໄດ້ຕາມແຜນການ, ໄປພ້ອມກັບການແກ້ໄຂການບຸກລຸກເນື້ອທີ່ບໍລິເວນຍອດນ້ຳ, ອ່າງເກັບນ້ຳ, ການບຸກເບີກເນື້ອທີ່ການຜະລິດກາຍເຂດສະຫງວນ, ການຈູດປ່າແບບຊະຊາຍ;

5) ເອົາໃຈໃສ່ຕິດຕາມການປ່ອຍເງິນກູ້ໃຫ້ແກ່ທຸລະກິດຂະໜາດນ້ອຍ, ຂະໜາດກາງ ທີ່ເຮັດການຜະລິດ, ປຸງແຕ່ງເພື່ອຊົມໃຊ້ພາຍໃນ ແລະ ສົ່ງອອກຢ່າງເຂັ້ມງວດ ພ້ອມທັງສົ່ງເສີມໃຫ້ເຂົາເຈົ້າມີຄວາມເຂັ້ມແຂງ;
6) ສຸມໃສ່ແກ້ໄຂ, ປະຕິບັດບັນດາຄາດໝາຍ ໃນຂົງເຂດວັດທະນະທຳ-ສັງຄົມ ໃຫ້ບັນລຸ ເປັນຕົ້ນ ແກ້ໄຂບັນຫາຄູ-ແພດ ອາສາສະໝັກ, ບັນຫາຄູເຫຼືອບໍ່ພໍ, ປັບປຸງຄຸນນະພາບການຮຽນ-ການສອນ ພ້ອມທັງຕິດຕາມກວດກາ ເພື່ອຊອກຫາສາເຫດ ແລະ ວິທີແກ້ໄຂ ກ່ຽວກັບ ການປະລະການຮຽນຂອງນັກຮຽນ; ສືບຕໍ່ຂະຫຍາຍອັດຕາການປົກຄຸມປະກັນສັງຄົມ, ປະກັນສຸຂະພາບ ໂດຍຖືເອົາວຽກງານດັ່ງກ່າວເປັນໜ້າທີ່ຂອງທຸກພາກສ່ວນໃນສັງຄົມ;
7) ສືບຕໍ່ແກ້ໄຂບັນຫຍໍ້ທໍ້ໃນສັງຄົມໃຫ້ທັນການ ແລະ ຫລຸດລົງ ເປັນຕົ້ນແມ່ນບັນຫາຢາເສບຕິດ ປະເພດຕ່າງໆ, ການຂີ້ລັກງັດແງະ ແລະ ອື່ນໆ.

**ມາດຕາ 5 ການຈັດຕັ້ງປະຕິບັດ**

1. ມອບໃຫ້ ອົງການປົກຄອງແຂວງ ຊີ້ນຳບັນດາພະແນກການ, ອົງການລັດ ຂອງແຂວງ ແລະ ອົງການປົກຄອງເມືອງ ຈັດຕັ້ງປະຕິບັດ ມະຕິສະບັບນີ້ ຢ່າງເຂັ້ມງວດ;
2. ມອບໃຫ້ ຄະນະປະຈຳສະພາປະຊາຊົນແຂວງ ຊີ້ນຳ ບັນດາຄະນະກຳມະການ ແລະ ຄະນະສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງເມືອງ ສືບຕໍ່ຊຸກຍູ້ ແລະ ຕິດຕາມກວດກາ ການຈັດຕັ້ງປະຕິບັດມະຕິສະບັບນີ້ ຕາມພາລະບົດບາດ, ຂອບເຂດສິດ ແລະ ໜ້າທີ່ຂອງຕົນ ຢ່າງເຂັ້ມງວດ.

**ມາດຕາ 6 ຜົນສັກສິດ**

ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ປະທານສະພາປະຊາຊົນແຂວງ

ເພັງນິລັນ ຄຳພັນເພັງ